ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 43/ຫກ
ນະຄອນຫຼວງວຽງຈັນ, ວັນທີ: 23 ຕຸລາ 2018

ສໍານັກງານ ຄຄຊ
ເລກທີ 1111
ວັນທີ 26 OCT 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈໍາອາທິດທີ 01-05/10/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,89% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຂະແໜງການບໍລິການຂອງສະຫະລັດອາເມລິກາ ໃນເດືອນ 09/2018 ເພີ່ມຂຶ້ນຢູ່ທີ່ລະດັບ 61,6 ຈຸດ ຈາກລະດັບ 58,5 ຈຸດ ໃນເດືອນຜ່ານມາ ແລະ ອັດຕາສ່ວນການວ່າງງານ ຫຼຸດລົງ ຢູ່ທີ່ລະດັບ 3,7 % ຈາກ 3,9 % ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 24-28/09/2018 | ອາທິດນີ້ 01-05/10/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1595 | 1,1493 | 0,89% |
| ເຢນ/ໂດລາ | 113,41 | 113,88 | -0,41% |
| ບາດ/ໂດລາ | 32,340 | 32,880 | -1,64% |
| ເປໂຊ/ໂດລາ | 54,08 | 54,29 | -0,38% |
| ຣູເປັຍ/ໂດລາ | 14.900,00 | 15.185,00 | -1,88% |
| ໂດລາສິງກະໂປ/ໂດລາ | 1,3679 | 1,3826 | -1,06% |
| ຢວນ/ໂດລາ | 6,8820 | 6,8697 | 0,18% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 3,07% ເປັນ 74,51 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນກາຊວນຂອງ ສະຫະລັດ ອາເມລິກາ ຫຼຸດລົງ 1,75 ລ້ານບາເຣວ ໃນອາທິດທີ 28/09/2018 ຈາກຫຼຸດລົງ 2,24 ລ້ານບາເຣວ ໃນອາທິດຜ່ານມາ;

- ລາຄາຄຳ ເພີ່ມຂຶ້ນ 1,48% ເປັນ 1.201,72 ໂດລາ/ອອນ ເນື່ອງຈາກການຜັນຜວນຂອງເງິນໂດລາ ເຮັດໃຫ້ນັກລົງທຶນ ເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,14% ແລະ ແຂງຄ່າຂຶ້ນ 0,47% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,52% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,45% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 28/09/2018 | | | ອາທິດນີ້ 05/10/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.613,53 | 8.640,67 | 8.628,50 | 8,599,86 | 8.628,83 | 8.616,12 | 0,16% | 0,14% | 0,14% | -3,47% | -3,50% | -3,52% |
| ບາດ | 268,61 | 269,93 | 269,32 | 267,22 | 268,60 | 268,07 | -0,52% | 0,50% | 0,47% | -4,56% | -4,41% | -4,45% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,53% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 11,56%;

- ປະລິມານເງິນ M2 ຫຼຸດລົງ 0,58% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,99%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳ ອາທິດ (28/09-04/10/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 8,70 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 19,64 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 28,34 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 6,94 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 340,95 ລ້ານບາດ ແລະ ຂາຍເງິນບາດໄດ້ 347,89 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 34,28% ແຕ່ເງິນບາດ ເພີ່ມຂຶ້ນ 50,20%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 10,82 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 44,09 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,50 ລ້ານໂດລາ ແລະ ເງິນບາດ ຈຳນວນ 55,00 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 21-27/09/2018 | | ອາທິດນີ້ 28/9-04/10/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **17,98** | **113,28** | **19.64** | **340.95** | **9.23%** | **200.98%** |
| - ທ/ຄທຸລະກິດລັດ | 8,42 | 65,40 | 6.92 | 38.43 | -17.81% | -41.24% |
| - ທ/ຄທຸລະກິດອື່ນໆ | 9,56 | 47,88 | 12.72 | 302.52 | 33.05% | 531.83% |
| 2. ການຂາຍເງິນຕາຕ່າງປະເທດ | **55,03** | **345,34** | **28.34** | **347.89** | **-48.50%** | **0.74%** |
| - ທ/ຄທຸລະກິດລັດ | 31,42 | 99,64 | 10.17 | 105.75 | -67.63% | 6.13% |
| - ທ/ຄທຸລະກິດອື່ນໆ | 23,61 | 245,70 | 18.17 | 242.14 | -23.04% | -1.45% |
| ຊື້-ຂາຍສຸດທິ ທທກ | **-37,05** | **-232,06** | **-8.70** | **-6.94** | **-76.52%** | **-97.01%** |
| - ຜົດດ່ຽງຊື້-ຂາຍ | -206,06% | -204,86% | -44.30% | -2.04% | -78.50% | -99.01% |
| - ມູນຄ່າການຊື້-ຂາຍ | **73,01** | **458,62** | **47.98** | **688.84** | **-34.28%** | **50.20%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-18,97** | **-72,20** | **-10.82** | **-44.09** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 1.70 | 100.00 | | |
| - ທຫລ ຂາຍໃຫ້ ທທກ | 18,97 | 72,20 | 12.52 | 144.09 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,86** | **23,20** | **4.50** | **55.00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 10/2018 ຄາດວ່າຈະຢູ່ໃນລະດັບ 3,18%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 128,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 53,61 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 49,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 43,42 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 725 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 32 ສະບັບ ເທົ່າກັບ 4,23% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 481,34 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 24,14 ຕື້ກີບ ເທົ່າກັບ 5,28%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (28/9-04/10/2018) ມີທັງໝົດ 4.126 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 4.005 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 254 ຕື້ກີບ ຈາກ 1.229,76 ຕື້ກີບ ມາເປັນ 975,37 ຕື້ກີບ ເທົ່າກັບ 20,68%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 121 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 29,13 ຕື້ກີບ ຈາກ 111,48 ຕື້ກີບ ມາເປັນ 82,35 ຕື້ກີບ ເທົ່າກັບ 26,13%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 878,34 ຈຸດ ເພີ່ມຂຶ້ນ ຈາກ 869,98 ຈຸດ ຫຼື ເທົ່າກັບ 0,96% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 237.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,84 ຕື້ກີບ ຫຼຸດລົງ 17,30% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 73,75% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ EDL-Gen.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 69.000 | 386.415.000 | 5.650 | **39.500** | **221.275.000** | **5.650** | -42,75 | -42,74 | - |
| **EDL-GEN** | 74.300 | 309.685.000 | 4.250 | **61.500** | **260.695.000** | **4.350** | -17,23 | -15,82 | 2,35 |
| **LWPC** | 100 | 800.000 | 8.000 | - | - | **8.000** | -100 | -100 | - |
| **PTL** | 2.000 | 3.165.000 | 1.550 | **9.400** | **13.160.000** | **1.400** | 370,00 | 315,80 | -9,68 |
| **SVN** | 100 | 160.000 | 1.600 | - | - | | -100 | -100 | - |
| **PCD** | 100 | 120.000 | 1.200 | **100** | **120.000** | **1.200** | - | - | - |
| **LCC** | 1.500 | 2.900.000 | 1.900 | - | - | **1.900** | -100 | -100 | - |
| **MHTL** | 107.900 | 314.605.000 | 2.900 | **123.400** | **343.655.000** | **2.800** | 14,37 | 9,23 | -3,45 |
| **LAT** | 238.300 | 333.610.000 | 1.200 | **3.100** | **2.810.000** | **900** | -98,70 | -99,16 | -25,00 |
| ທັງໝົດ | 255.000 | 1.017.850.000 | - | **237.000** | **841.715.000** | | -7,06 | -17,30 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມກົມການເມືອງ ປະຈຳເດືອນກັນຍາ 2018, ❷ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນຕຸລາ 2018, ❸ ກອງປະຊຸມລະດັບສູງກ່ຽວກັບການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ❹ ກອງປະຊຸມຄະນະຄົ້ນຄວ້ານິຕິກຳຄຸ້ມຄອງເງິນຄຣິບໂຕ (CryptoCurrency), ❺ ກອງປະຊຸມເຜີຍແຜ່ກ່ຽວກັບແຈ້ງການໃນການແລກປ່ຽນທະນະບັດໃບໃໝ່ໃຫ້ແກ່ມວນຊົນທົ່ວໄປ,❻ ກອງປະຊຸມປຶກສາຫາລືຕໍ່ເນື້ອໃນຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ, ❼ ພິທີເປີດນຳໃຊ້ໂປຣແກມຕະຫຼາດລະຫວ່າງທະນາຄານ (Interbank) ແລະ ❽ ໃຫ້ສຳພາດແກ່ວາລະສານ The Report Company ຂອງປະເທດແອດສະປາຍ;

- ຈັດພິທີເປີດງານວາງສະແດງຜົນງານ ແລະ ພິທີສະເຫຼີມສະຫຼອງສ້າງຕັ້ງ ທຫລ ຄົບຮອບ 50 ປີ, ຈັດກິລາບານເຕະ, ກິລາມວນຊົນ ແລະ ສິລະປະຮອບຊິງຊະນະເລີດ ເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ

- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ອຳນວຍການ ທຫລ ຈາກທີມງານປະເມີນເສດຖະກິດມະຫາພາກຂອງກອງທຶນການເງິນສາກົນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສ່ອງແສງສາຍພັກ ແລະ ສາຍລັດປະຈຳເດືອນ ກັນຍາ 2018, ❷ ກອງປະຊຸມປະຈຳປີຂອງກອງທຶນການເງິນສາກົນ, ❸ ກອງປະຊຸມແຜນການກຳນົດທິດທາງການສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະສະສາງ, ❹ ພິທີເປີດສົກຮຽນໃໝ່ ແລະ ສະເຫຼີມສະຫຼອງວັນຄູແຫ່ງຊາດ;

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຈາກ❶ ຄະນະທີມງານຈາກສະຖາບັນການເຕີບໂຕສີຂຽວໂລກ ແລະ ❷ ຄະນະຜູ້ບໍລິຫານ ບໍລິສັດ ເອັນ ແອນ ຢັງລາວ ຈຳກັດ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ